# ພຣະທັມເພງຄ່ຳຄວນ


| 1 | 2 | 3 | 4 | 5 |
|---|---|---|---|---|


## ເພງຄ່ຳຄວນ

## LAMENTATIONS

### 1 ຄວາມໂສກເສົ້າຂອງຊີໂອນທີ່ເປັນຊະເລີຍ

The Deserted City

1 ກຸງທີ່ແຫນ້ນຫນາດ້ວຍພົລເມືອງມາອ້າງວ້າງຢູ່ໄດ້ຫນໍ ນະຄອນທີ່ຮຸ່ງເຮືອງຢູ່ຖ້າມກາງປະຊາຊາດມາກາຍເປັນ
ດັ່ງຍິງຫມ້າຍຫນໍ ນະຄອນທີ່ເປັນດັ່ງເຈົ້າຍິງຖ້າມກາງເມືອງທັງຫລາຍ ກໍກັບເປັນເມືອງຂຶ້ນຂອງເຂົາໄປ
2 ນະຄອນນັ້ນຮ້ອງໄຫ້ສະອື້ນໃນຣາຕຣີການ ແລະນ້ຳຕາຂອງນາງກໍອາບແກ້ມ ນາງຈະຫາໃຜຖ້າມກາງຄົນທີ່ຮັກ
ນາງໃຫ້ມາເລົ້າໂລມກໍຫາບໍ່ພົບ ບັນດາຫມູ່ເພື່ອນຂອງນາງຫມົດທຸກຄົນໄດ້ທໍຣະຍົດຕໍ່ນາງ ເຂົາທັງປວງກັບ
ເປັນສັດຕຣູຂອງນາງ
3 ຢູດາໄດ້ຖືກກວາດໄປເປັນຊະເລີຍ ໄດ້ຮັບຄວາມທຸກໃຈ ຕ້ອງທຳງານຢ່າງທາດ ນາງຕ້ອງອາສັຍຖ້າມກາງປະ
ຊາຊາດທັງຫລາຍ ນາງບໍ່ພົບທີ່ພັກສງົບເລີຍ ບັນດາຜູ້ຂົ່ມເຫັງໄດ້ໄລ່ທັນນາງ ເມື່ອເວລານາງທຸກໃຈ
4 ຖນົນຫົນທາງທີ່ເຂົ້າກຸງເຢຣູຊາເລັມກໍໂສກເສົ້າຢູ່ ເພາະບໍ່ມີຜູ້ໃດເດີນໄປໃນງານເທສການ ບັນດາປະຕູເມືອງ
ຂອງນາງຫວ່າງເປົ່າ ພວກປະໂຣຫິດທັງປວງຂອງນາງໄດ້ພາກັນຖອນໃຈ ສາວພົມມະຈາຣີທັງຫລາຍຂອງນາງ
ກໍຕ້ອງທົນທຸກ ແລະຕົວນາງເອງກໍໄດ້ຮັບຄວາມຂົ່ມຂື່ນຍິ່ງນັກ
5 ພວກຄົນທີ່ຂັດຂວາງນາງກາຍເປັນຫົວຫນ້າ ພວກສັດຕຣູຂອງນາງໄດ້ຈະເຣີນຂຶ້ນ ດ້ວຍວ່າ
ພຣະເຈົ້າໄດ້ຊົງກະທຳໃຫ້ນາງທົນທຸກ ເພາະຄວາມທໍຣະຍົດອັນມະຫັນຂອງນາງ ລູກເຕົ້າທັງຫລາຍຂອງນາງ
ຕົກເປັນຊະເລີຍຕໍ່ຫນ້າສັດຕຣູ
6 ແລະຄວາມຮຸ່ງເຮືອງຕະການ ໄດ້ພາກໄປຈາກທິດາແຫ່ງຊີໂອນເສັຽແລ້ວ ພວກເຈົ້ານາຍຂອງນາງກໍກັບເປັນດັ່ງ
ຝູງກວາງ ທີ່ຫາທົ່ງຫຍ້າລ້ຽງຊີວິດບໍ່ໄດ້ ແລະໄດ້ແລ່ນຫນີໄປຂ້າງຫນ້າຜູ້ໄລ່ຕິດຕາມ
7 ເຢຣູຊາເລັມເມື່ອຕົກຢູ່ໃນຍາມທຸກໃຈ ແລະຍາມລຳບາກກໍໄດ້ຫວນລະນຶກເຖິງສິ່ງປະເສີດ ທີ່ຕົນເຄີຍມີໃນຄັ້ງ
ກ່ອນ ເມື່ອພົລເມືອງຂອງນາງຕົກຢູ່ໃນມືຂອງສັດຕຣູ ແລະຫາບໍ່ມີຜູ້ໃດຈະສົງເຄາະນາງ ພວກສັດຕຣູເຫັນນາງ
ແລ້ວກໍເຍາະເຍີ້ຍຄວາມຫລົ້ມຈົມຂອງນາງ
8 ເຢຣູຊາເລັມໄດ້ທຳບາບຢ່າງໃຫຍ່ຫລວງ ເຫດສະນີ້ນາງຈຶ່ງເປັນສິ່ງມົນທິນ ບັນດາຄົນທີ່ເຄີຍໃຫ້ກຽດນາງກໍລົບ
ລູ່ນາງ ເພາະເຫດເຂົາທັງຫລາຍເຫັນຄວາມອັປຍົດຂອງນາງ ໂອ ນາງເອງໄດ້ຖອນໃຈ ແລະຫັນຫນ້າຂອງນາງ
ໄປເສັຽ
9 ມົນທິນຂອງນາງກໍຂັງໃນກະໂປງຂອງນາງ ແລະນາງບໍ່ໄດ້ຄຳນຶງເຖິງອະນາຄົດ ດັ່ງນັ້ນນາງຈຶ່ງເສື່ອມໂຊມລົງ
ໄວຢ່າງຫນ້າຕົກໃຈ ນາງກໍບໍ່ມີຜູ້ໃດເລົ້າໂລມ “ຂ້າແດ່ພຣະເຈົ້າ ຂໍທອດພຣະເນດ ຄວາມທຸກໃຈຂອງຂ້າພຣະ
ອົງ ເພາະພວກສັດຕຣູໄດ້ແຂງຂໍ້ຍົກຕົວຂຶ້ນແລ້ວ”
10 ພວກສັດຕຣູໄດ້ຍື່ນມືຂອງເຂົາ ຍຶດເອົາບັນດາຂອງປະເສີດຂອງນາງ ດ້ວຍນາງໄດ້ເຫັນບັນດາປະຊາຊາດບຸກ
ເຂົ້າມາໃນສະຖານນະມັສການຂອງນາງ ຄືຄົນທີ່ພຣະອົງໄດ້ຊົງຫ້າມບໍ່ໃຫ້ເຂົ້າມາໃນຊຸມນຸມຊົນຂອງພຣະອົງ

11 ບັນດາພົລເມືອງຂອງນາງໄດ້ຫາຍໃຈໃຫຍ່ ເມື່ອເຂົາທັງຫລາຍຊອກຫາອາຫານແລະພວກເຂົາໄດ້ເອົາຊັບສິນ
ຂອງຕົວອອກແລກອາຫານກິນເພື່ອຈະໄດ້ລ້ຽງຊີວິດ “ຂ້າແຕ່ພຣະເຈົ້າ ຂໍຊົງທອດພຣະເນດ ເພາະຂ້າພຣະອົງ
ເປັນທີ່ຢຽດຫຍາມເສັຽແລ້ວ”
12 ເບິ່ງແມ, ທ່ານທັງຫລາຍທີ່ເດີນຜ່ານໄປ ທ່ານບໍ່ໄດ້ເກີດມີຄວາມຮູ້ສຶກຫຍັງບໍ ຈົ່ງເບິ່ງດູ ວ່າມີຄວາມທຸກອັນໃດ
ແດ່ທີ່ເຫມືອນຄວາມທຸກທີ່ມາສູ່ຂ້າພະເຈົ້າ ເປັນຄວາມທຸກຊຶ່ງພຣະເຈົ້າໄດ້ຊົງກະທຳແກ່ຂ້າພະເຈົ້າ ໃນວັນທີ່ພ
ຣະອົງຊົງພຣະພິໂຣດຂ້າພະເຈົ້າຢ່າງຮ້າຍແຮງນັ້ນ
13 “ພຣະອົງໄດ້ຊົງສົ່ງໄຟລົງມາຈາກເບື້ອງເທິງ ໃຫ້ເຂົ້າໄປໃນກະດູກທັງຫລາຍຂອງຂ້າພະເຈົ້າ ພຣະອົງໄດ້ຊົງ
ຫ້າງແຮ້ວໄວ້ດັກຕີນຂອງຂ້າພະເຈົ້າ ພຣະອົງໄດ້ຊົງກະທຳໃຫ້ຂ້າພະເຈົ້າຕ້ອງຫັນກັບຄືນ ພຣະອົງໄດ້ຊົງກະທຳ
ໃຫ້ຂ້າພະເຈົ້າຢູ່ໂດດດ່ຽວ ແລະອ່ອນລະອາຢູ່ຕລອດວັນ
14 “ພາຣະແຫ່ງການທໍຣະຍົດທັງມວນຂອງຂ້າພະເຈົ້າກໍຖືກຮວມເຂົ້າກັນເປັນແອກ ໂດຍພຣະຫັດຂອງພຣະອົງຊົງ
ຮວບມັດໄວ້ ແອກນັ້ນຮັດຕຶງຮອບຄໍຂ້າພະເຈົ້າ ພຣະອົງໄດ້ຊົງກະທຳໃຫ້ກຳລັງຂ້າພະເຈົ້າຖອຍໄປ ອົງພຣະຜູ້
ເປັນເຈົ້າໄດ້ຊົງມອບຂ້າພະເຈົ້າໄວ້ໃນມືຂອງເຂົາທັງຫລາຍ ຊຶ່ງຂ້າພະເຈົ້າບໍ່ສາມາດຕໍ່ຕ້ານໄດ້
15 “ອົງພຣະຜູ້ເປັນເຈົ້າໄດ້ຊົງຖິ້ມນັກຮົບຂອງຂ້າພະເຈົ້າຖ້າມກາງຂ້າພະເຈົ້າ ພຣະອົງໄດ້ຊົງເກນຊຸມນຸມຊົນເຂົ້າ
ມາຕໍ່ສູ້ຂ້າພະເຈົ້າ ເພື່ອຈະຢຽບຢໍ່າຊາຍສະກັນຂອງຂ້າພະເຈົ້າໃຫ້ແຫລກໄປ ພຣະເຈົ້າໄດ້ຊົງຢໍ່າລູກສາວພົມ
ມະຈາຣີແຫ່ງຢູດາ ດັ່ງຢຽບຫມາກອະງຸ່ນລົງໃນບໍ່ຢໍ່າຫມາກອະງຸ່ນ
16 “ເພາະເຫດນີ້ເອງທີ່ຂ້າພະເຈົ້າຮ້ອງໄຫ້ ຕາຂອງຂ້າພະເຈົ້າມີນໍ້າຕາໄຫລລົງມາ ເພາະຜູ້ອອຍໃຈຢູ່ໄກຈາກຂ້າ
ພະເຈົ້າ ຄືຜູ້ທີ່ໃຫ້ກຳລັງໃຈຂ້າພະເຈົ້າ ແລະພວກລູກຂອງຂ້າພະເຈົ້າກໍໂດດດ່ຽວເພາະພວກສັດຕຣູໄດ້ຊັຍຊະ
ນະ”
17 ເມືອງຊີໂອນໄດ້ຢຽດມືທັງສອງອອກອ້ອນວອນ ແຕ່ກໍບໍ່ມີໃຜທີ່ເລົ້າໂລມນາງໄດ້ ພຣະເຈົ້າຊົງມີພຣະບັນຊາ
ກ່າວໂທດຢາໂຄບ ວ່າໃຫ້ພວກທີ່ຢູ່ອ້ອມຮອບຢາໂຄບຕັ້ງຕົວຂຶ້ນເປັນຄູ່ສັດຕຣູ ເຢຣູຊາເລັມເປັນສິ່ງເປິະເປື້ອນ
ຖ້າມກາງເຂົາທັງຫລາຍ
18 “ພຣະເຈົ້າຊົງຊອບທັມແລ້ວ ເພາະຂ້າພະເຈົ້າໄດ້ຂັດຂືນພຣະບັນຍັດຂອງພຣະອົງ ເບິ່ງແມ ບັນດາຊົນຊາດທັງ
ຫລາຍ ຂ້າພະເຈົ້າຂໍທ່ານໄດ້ຟັງ ແລະຂໍຈົ່ງຫລຽວເບິ່ງຄວາມທົນທຸກຂອງຂ້າພະເຈົ້າ ສາວພົມມະຈາຣີຂອງຂ້າ
ພະເຈົ້າ ແລະຫນຸ່ມໆຂອງຂ້າພະເຈົ້າຕົກໄປເປັນຊະເລີຍແລ້ວ
19 “ຂ້າພະເຈົ້າໄດ້ຮ້ອງເອີ້ນບັນດາຄົນຮັກຂອງຂ້າພະເຈົ້າ ແຕ່ເຂົາທັງຫລາຍໄດ້ຫລອກລວງຂ້າພະເຈົ້າ ພວກປະ
ໂຣຫິດແລະພວກຜູ້ໃຫຍ່ຂອງຂ້າພະເຈົ້າກໍຕາຍທີ່ກາງເມືອງ ຂນະເມື່ອເຂົາອອກຫາອາຫານເພື່ອລ້ຽງຊີວິດຂອງ
ຕົນ
20 “ຂ້າແດ່ພຣະເຈົ້າ ໂຜດທອດພຣະເນດ ເພາະຂ້າພຣະອົງມີຄວາມທຸກ ຈິດໃຈຂອງຂ້າພຣະອົງມີຄວາມ
ຫວຸ້ນວາຍ ຈິດໃຈຂອງຂ້າພະເຈົ້າເຈັບປວດ ເພາະຂ້າພຣະອົງມັກກະບົດຢ່າງຮ້າຍກາດ ນອກບ້ານມີຄົນຕ້ອງ
ຄົມດາບຕາຍ ໃນບ້ານກໍມີຄົນຕາຍດ້ວຍ
21 ເຂົາທັງຫລາຍໄດ້ຍິນວ່າ ຂ້າພຣະອົງຫາຍໃຈຢ່າງໃດ ຫາມີຜູ້ໃດມາເລົ້າໂລມໃຈຂ້າພຣະອົງ ບັນດາສັດຕຣູຂອງ
ຂ້າພຣະອົງໄດ້ຍິນເຖິງເຫດຮ້າຍທີ່ຕົກແກ່ຂ້າພຣະອົງ ເຂົາທັງຫລາຍກໍພາກັນດີໃຈທີ່ພຣະອົງໄດ້ຊົງກະທຳຢ່າງ
ນີ້ ຂໍໂຜດນຳເອົາມື້ທີ່ ພຣະອົງຊົງປະກາດໄວ້ນັ້ນໃຫ້ມາເຖິງ ແລະເຂົາທັງຫລາຍຈະເປັນຢ່າງທີ່ຂ້າພຣະອົງ
ເປັນຢູ່ນີ້
22 “ຂໍໃຫ້ບັນດາການຊົ່ວຂອງເຂົາທັງຫລາຍມາປາກົດຕໍ່ພຣະພັກພຣະອົງ ແລະຂໍຊົງກະທຳແກ່ເຂົາທັງຫລາຍ
ເຫມືອນທີ່ພຣະອົງໄດ້ຊົງກະທຳແກ່ຂ້າພຣະອົງ ເພາະການທໍຣະຍົດທັງສິ້ນຂອງຂ້າພຣະອົງເຖີດ ດ້ວຍຄວາມ
ສະທ້ອນຫາຍໃຈຂອງຂ້າພຣະອົງນັ້ນມີຫລາຍຄັ້ງ ແລະຈິດໃຈຂອງຂ້າພຣະອົງກໍອ່ອນເພັຽເຕັມທີແລ້ວ”

## 2 ຄວາມເສົ້າໂສກຂອງຊີໂອນຈາກພຣະເຈົ້າ

God’s Warnings Fulfilled

1 ດ້ວຍພຣະພິໂຣດ ພຣະເຈົ້າຊົງໃຊ້ເມກບັງທິດາຂອງຊີໂອນຫນໍ ພຣະອົງໄດ້ຊົງແກວ່ງສະງ່າຣາສີຂອງອິສຣາ
ເອນໃຫ້ຕົກລົງຈາກຟ້າເຖິງດິນ ພຣະອົງບໍ່ໄດ້ຊົງລະນຶກເຖິງແທ່ນຮອງພຣະບາດຂອງພຣະອົງເລີຍ ໃນຍາມທີ່ພ
ຣະອົງຊົງໂກດຮ້າຍ
2 ພຣະເຈົ້າຊົງທຳລາຍທີ່ຢູ່ຂອງຢາໂຄບເສັຽສິ້ນແລ້ວໂດຍປາສຈາກພຣະກະຣຸນາ ດ້ວຍພຣະພິໂຣດຂອງພຣະອົງ
ໄດ້ຊົງພັງ ທີ່ກຳບັງທັງຫລາຍຂອງທິດາແຫ່ງຢູດາໃຫ້ທະລາຍລົງ ພຣະອົງໄດ້ຊົງກະທຳໃຫ້ຕ່ຳລົງເຖິງດິນ ແລະ
ຊົງໃຫ້ຣາຊອານາຈັກແລະເຈົ້ານາຍເປັນສິ່ງມົນທິນ
3 ດ້ວຍພຣະພິໂຣດພຣະອົງໄດ້ຊົງຕັດບັນດາອຳນາດແຫ່ງອິສຣາເອນໃຫ້ຂາດສິ້ນໄປ ພຣະອົງຊົງເອົາພຣະ
ຫັດເບື້ອງຂວາໜີເສັຽຈາກເຂົາຕໍ່ຫນ້າສັດຕຣູ ພຣະອົງຊົງເຜົາຜານຕະກູນຢາໂຄບດັ່ງໄຟທີ່ລຸກເຜົາໄຫມ້ໄປ
ຮອບໆ
4 ພຣະອົງຊົງກົ່ງທະນູຂອງພຣະອົງຢ່າງສັດຕຣູ ຊົງຍົກພຣະຫັດເບື້ອງຂວາເຫມືອນດັ່ງເປັນຜູ້ຂັດຂວາງ ແລະໄດ້
ຊົງປະຫານບັນດາຄົນທີ່ຕາຂອງເຮົາຈະອວດໄດ້ນັ້ນເສັຽໃນກະໂຈມທິດາແຫ່ງຊີໂອນ ພຣະອົງໄດ້ຊົງລະບາຍພ
ຣະພິໂຣດຂອງພຣະອົງອອກມາເຫມືອນດັ່ງໄຟ
5 ພຣະເຈົ້າຊົງກາຍເປັນສັດຕຣູ ພຣະອົງໄດ້ຊົງທຳລາຍພວກອິສຣາເອນເສັຽ ພຣະອົງໄດ້ຊົງທຳລາຍບັນດາວັງ
ຂອງເຂົາຫມົດ ແລະໄດ້ຊົງທຳລາຍທີ່ກຳບັງຂອງເຂົາໃຫ້ຫັກເພພັງ ຊົງເພີ້ມຄວາມເສົ້າໂສກແລະການຄ່ຳຄວນ
ໃນທິດາແຫ່ງຢູດາ
6 ພຣະອົງໄດ້ຊົງທຳລາຍພຣະວິຫານຂອງພຣະອົງເສັຽເຫມືອນນຶ່ງເປັນໄຟໃນສວນ ຊົງໃຫ້ສະຖານທີ່ປະຊຸມຂອງ
ພຣະອົງມຸ່ນທະລາຍໄປ ພຣະເຈົ້າໄດ້ຊົງກະທຳທັງເທສການແລະວັນສະບາໂຕໃຫ້ຫມົດສິ້ນໄປໃນຊີໂອນດ້ວຍ
ພຣະພິໂຣດ ພຣະອົງຊົງດູຫມິ່ນອົງກະສັດແລະປະໂຣຫິດພຣະເຈົ້າໄດ້ຊົງຖິ້ມແທ່ນບູຊາຂອງພຣະອົງເສັຽ ພຣະ
ອົງຊົງກຽດຊັງສະຖານທີ່ນະມັສການຂອງພຣະອົງ ກຳແພງວັງທັງຫລາຍນັ້ນພຣະອົງໄດ້ຊົງມອບໄວ້ໃນເງື້ອມ
ມືຂອງສັດຕຣູ ເຂົາທັງຫລາຍໄດ້ສົ່ງສຽງອຶກກະທຶກໃນພຣະວິຫານແຫ່ງພຣະເຈົ້າເຫມືອນຢ່າງໃນວັນເທສການ
7 ພຣະເຈົ້າໄດ້ຊົງຕັ້ງພຣະທັຍໄວ້ແລ້ວທີ່ຈະທຳລາຍ ກຳແພງຂອງທິດາຊີໂອນເສັຽ ພຣະອົງໄດ້ຊົງຂີດເສັ້ນ
ວັດແທກໄວ້ແລ້ວ ພຣະອົງບໍ່ໄດ້ຊົງຫົດພຣະຫັດເລີກການທຳລາຍ ເຫດສັນນີ້ ພຣະອົງໄດ້ຊົງກະທຳໃຫ້ຫໍຄອຍ
ແລະກຳແພງນັ້ນຄ່ຳຄວນ ໃຫ້ຫັກເພພັງຮ່ວງໂຣຍໄປດ້ວຍກັນ
8 ປະຕູເມືອງຊີໂອນທັງຫມົດຍຸບລົງໃນດິນແລ້ວ ພຣະອົງໄດ້ຊົງທຳລາຍ ແລະຊົງຫັກດານປະຕູທັງປວງເສັຽສິ້ນ
ກະສັດແລະເຈົ້ານາຍທັງຫລາຍແຫ່ງຊີໂອນກໍຕົກຢູ່ໃນຖ້າມກາງປະຊາຊາດທີ່ບໍ່ມີທັມບັນຍັດ ໂອ ບັນດາຜູ້ປະ
ກາດພຣະທັມແຫ່ງເມືອງຊີໂອນບໍ່ໄດ້ຮັບນິມິດຈາກພຣະເຈົ້າອີກ
9 ພວກຜູ້ໃຫຍ່ຂອງທິດາແຫ່ງຊີໂອນ” ກໍກຳລັງນັ່ງງຽບຢູ່ເທິງພື້ນແຜ່ນດິນ ເຂົາທັງຫລາຍເອົາຜົງຂີ້ດິນໂຣຍໃສ່ຫົວ
ຂອງຕົນ ແລະນຸ່ງຫົ່ມຜ້າກະສອບ ສາວພົມມະຈາຣີທັງຫລາຍແຫ່ງກຸງເຢຣູຊາເລັມກໍພາກັນກົ້ມຫົວລົງກັບພື້ນ
10 ຕາຂອງຂ້າພະເຈົ້າກໍອິດອ່ອນເພາະຮ້ອງໄຫ້ ຈິດວິນຍານຂອງຂ້າພະເຈົ້າກໍລະທົມ ເພາະຄວາມພິນາດຂອງທິ
ດາແຫ່ງຊົນຊາດຂອງຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າກໍລະທົມ ແລະເພາະເຫລົ່າເດັກເລັກເດັກນ້ອຍທີ່ດູດ
ນົມຢູ່ນັ້ນ ເປັນລົມສລົບຢູ່ຕາມທາງໃນເມືອງ
11 ລູກທັງຫລາຍຖາມແມ່ຂອງຕົນວ່າ, “ແມ່ເອີຍ ເຂົ້າແລະເຫລົ້າອະງຸ່ນຢູ່ໃສ?” ເຂົາພາກັນຖາມ ຂນະທີ່ເຂົາ
ເປັນລົມເຫມືອນຄົນທີ່ຖືກບາດເຈັບຢູ່ຕາມທາງໃນເມືອງ ເມື່ອຊີວິດຂອງເຂົາຕ້ອງສິ້ນໄປ ທີ່ເອິກແມ່ຂອງເຂົາ
ທັງຫລາຍ

12 ໂອ ທິດາແຫ່ງເຢຣູຊາເລັມເອີຍ ຂ້າພະເຈົ້າຈະເອົາມາປຽບກັບເຈົ້າໄດ້ ຂ້າພະເຈົ້າຈະປຽບເຈົ້າກັບຫຍັງ ໂອ ທິດາພົມມະຈາຣີແຫ່ງຊີໂອນເອີຍ ຂ້າພະເຈົ້າຈະເອົາເຈົ້າໄປປຽບແກ່ຫຍັງ ເພື່ອຂ້າພະເຈົ້າຈະເລົ້າໂລມເຈົ້າໄດ້ ເພາະຄວາມຫລົ້ມຈົມຂອງເຈົ້າກໍໃຫຍ່ຫຼຽມເທົ່າມະຫາສະມຸດ ຜູ້ໃດຈະໃຫ້ເຈົ້າກັບຄືນສູ່ສະພາບເດີມ

13 ຜູ້ປະກາດພຣະທັມຂອງເຈົ້າໄດ້ເຫັນນິມິດລວງ ແລະນິມິດບໍ່ເປັນເຣື່ອງເປັນລາວມາບອກເຈົ້າ ແທນທີ່ເຂົາຈະເຜີຍບາບຂອງເຈົ້າອອກມາໃຫ້ແຈ້ງ ເພື່ອຈະໃຫ້ເຈົ້າກັບສູ່ສະພາບດີ ແຕ່ເຂົາທັງຫລາຍໄດ້ເຫັນຄຳໂອອາດເປັນຄວາມເປົ່າໆແລະຄວາມລໍ້ລວງສຳລັບເຈົ້າ

14 ບັນດາຄົນທີ່ໄດ້ຜ່ານເຈົ້າໄປກໍໄດ້ຕົບມືເຍາະເຍີ້ຍເຈົ້າ ເຂົາທັງຫລາຍໄດ້ຫຍໍ້ຫຍັນ ແລະໄດ້ສັ່ນຫົວເຍາະເຍີ້ຍທິດາແຫ່ງເຢຣູຊາເລັມແລ້ວວ່າ, "ນີ້ຫລືຄືເມືອງ ທີ່ຄົນທັງຫລາຍໄດ້ຂນານນາມວ່າງົດງາມຍິ່ງວ່າເປັນຄວາມຊື່ນຊົມຍິນດີຂອງຄົນທົ່ວທັງໂລກ"

15 ບັນດາສັດຕຣູຂອງເຈົ້າ ໄດ້ອ້າປາກຮ້ອງໃສ່ເຈົ້າ ເຂົາທັງຫລາຍເບະປາກ ແລະກັດແຂ້ວຄ້ຽວຟັນ ເຂົາພາກັນຮ້ອງວ່າ, "ພວກເຮົາໄດ້ທຳລາຍເມືອງນີ້ແລ້ວ ວັນນີ້ແຫລະ,ຄືວັນທີ່ພວກເຮົາໄດ້ຄອງຫາ ພວກເຮົາໄດ້ພົບແລ້ວພວກເຮົາເຫັນແລ້ວ"

16 ພຣະເຈົ້າໄດ້ຊົງກະທຳຕາມແລະພຣະປະສົງແລ້ວ ໄດ້ຊົງກະທຳໃຫ້ພຣະດຳຣັດຂອງພຣະອົງສຳເຣັດ ຕາມທີ່ພຣະອົງໄດ້ສະຖາປະນາໄວ້ນານແລ້ວ ພຣະອົງກໍໄດ້ຊົງທຳລາຍລົງຢ່າງບໍ່ມີພຣະເມດຕາ ພຣະອົງຊົງກະທຳໃຫ້ສັດຕຣູຍິນດີເຍີ້ຍເຈົ້າ ພຣະອົງໄດ້ຊົງຊູກຳລັງຂອງພວກສັດຕຣູຂອງເຈົ້າຂຶ້ນ

17 ຈິດໃຈຂອງເຂົາທັງຫລາຍຮ້ອງທູນພຣະເຈົ້າວ່າ ໂອ ກ□າແພງຂອງທິດາແຫ່ງເຢຣູຊາເລັມເອີຍ ຈົ່ງຫລັ່ງນ້ຳຕາໃຫ້ໄຫລອາບ ທັງກາງເວັນແລະກາງຄືນດັ່ງນ້ຳໃນລຳຫ້ວຍ ເຈົ້າຢ່າໄດ້ຢຸດຢ່ອນເລີຍ ຢ່າໃຫ້ນ້ຳຕາແຫ້ງຈາກໜ່ວຍຕາເລີຍ

18 ຈົ່ງລຸກຂຶ້ນຮ້ອງໄຫ້ໃນກາງຄືນຕາມຍາມລະບາຍຄວາມໃນໃຈຂອງເຈົ້າອອກມາຢ່າງນ້ຳ ຕໍ່ພຣະພັກພຣະເຈົ້າຈົ່ງຊູມືທັງສອງຂອງເຈົ້າຂຶ້ນຕໍ່ໄປຍັງພຣະອົງ ເພື່ອຂໍຊີວິດຂອງບັນດາລູກໆຂອງເຈົ້າທີ່ຫິວຈົນເປັນລົມສລົບໄປຕາມຖນົນຫົນທາງທຸກແຫ່ງ

19 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍທອດພຣະເນດເຖີດວ່າ ພຣະອົງໄດ້ຊົງກະທຳການເຊັ່ນນີ້ແກ່ຜູ້ໃດ ຄວນທີ່ພວກຜູ້ຍິງຈະກິນລູກຂອງ  ຕົນ ຫລືຈະກິນແອນ້ອຍທີ່ຍັງອຸ້ມຢູ່ຫລື ພວກປະໂຣຫິດ ແລະພວກຜູ້ປະກາດພຣະທັມຄວນຈະຖືກປະຫານໃນສະຖານນະມັສການຂອງອົງພຣະຜູ້ເປັນເຈົ້າຫລື

20 ຄົນໜຸ່ມແລະຄົນແກ່ ນອນຢຽດຢູ່ຕາມພື້ນດິນໃນຖນົນ ສາວພົມມະຈາຣີ ແລະຊາຍໜຸ່ມຂອງຂ້າພຣະອົງຖືກຄົມດາບຟັນລົ້ມລົງ ພຣະອົງໄດ້ຊົງປະຫານເຂົາໃນວັນເມື່ອພຣະອົງຊົງພິໂຣດ ໄດ້ຊົງສັງຫານເຂົາເສັຽໂດຍປາສຈາກພຣະກະຣຸນາ

21 ພຣະອົງໄດ້ຊົງເຊີນເຫລົ່າສັດຕຣູຜູ້ທີ່ຂ້າພຣະອົງຢ້ານອ້ອມຮອບທຸກດ້ານມາ ຢ່າງໃນວັນເທສການ ພໍເຖິງວັນທີ່ພຣະອົງຊົງພຣະພິໂຣດກໍບໍ່ມີຈັກຄົນນຶ່ງໜີເອົາຕົວລອດໄດ້ ຫລືຄົງເຫລືອຕົກຄ້າງລອດຕາຍຢູ່ ຜູ້ທີ່ຂ້າພຣະອົງໄດ້ອຸ້ມຊູແລະລ້ຽງດູມານັ້ນ ສັດຕຣູຂອງຂ້າພຣະອົງໄດ້ເຜົາຜານເສັຽໝົດແລ້ວ

## 3 ຄວາມຫວັງທີ່ໄດ້ຮັບຄວາມບັນເທົາໂດຍພຣະກະຣຸນາຄຸນຂອງພຣະເຈົ້າ

The Punishment , Repentance,  and Hope

1 ຂ້າພະເຈົ້າເປັນຄົນທີ່ໄດ້ເຫັນຄວາມທຸກໃຈ ໂດຍໄມ້ແສ້ແຫ່ງພຣະພິໂຣດຂອງພຣະອົງ

2 ພຣະອົງຊົງນຳ ແລະພາຂ້າພະເຈົ້າມາໃນຄວາມມືດແລະບໍ່ແມ່ນໃນຄວາມສວ່າງ

3 ແທ້ຈິງພຣະອົງຊົງພິກພຣະຫັດຂອງພຣະອົງ ຕໍ່ສູ້ຂ້າພະເຈົ້າຢູ່ຕລອດວັນ

4 ເນື້ອແລະໜັງຂ້າພະເຈົ້າ ພຣະອົງຊົງກະທຳໃຫ້ລ່າເຫລືອງລົງ ພຣະອົງຊົງຫັກກະດູກຂ້າພະເຈົ້າແລ້ວ

5 ພຣະອົງຊົງສ້າງຮົ້ວຂັງຂ້າພະເຈົ້າ ຊົງເອົາຄວາມຂົມຂື່ນແລະຄວາມທຸກຍາກລຳບາກລ້ອມຂ້າພະເຈົ້າໄວ້
6 ພຣະອົງໄດ້ຊົງບັງຄັບຂ້າພະເຈົ້າໃຫ້ຢູ່ໃນທີ່ມືດ ດັ່ງຄົນທີ່ຕາຍນານແລ້ວ
7 ພຣະອົງຊົງກະທຳຮົ້ວລ້ອມຂ້າພະເຈົ້າໄວ້ເພື່ອຈະກັກຂັງບໍ່ໃຫ້ອອກໄປໄດ້ ພຣະອົງຊົງຕີໂຊ່ລ່າມຂ້າພະເຈົ້າໄວ້
8 ເມື່ອຂ້າພະເຈົ້າຮ້ອງກາບທູນຂໍຄວາມຊ່ອຍເຫລືອ ພຣະອົງບໍ່ຊົງຟັງຄຳອ້ອນວອນຂອງຂ້າພະເຈົ້າ
9 ພຣະອົງຊົງລ້ອມຂ້າພະເຈົ້າດ້ວຍກ້ອນຫີນທີ່ສະກັດ ພຣະອົງຊົງກະທຳໃຫ້ຫົນທາງຂ້າພະເຈົ້າຄົດລ້ຽວໄປ
10 ທີ່ຂ້າພະເຈົ້າ ພຣະອົງຊົງທຳທ່າ ເຫມືອນຫມີຄອຍຄຸບ ແລະດັ່ງສິງລີ້ຈອບຢູ່ໃນທີ່ລັບ
11 ພຣະອົງຊົງພາຂ້າພະເຈົ້າໄຫລໄປຈາກທາງຂອງຂ້າພະເຈົ້າ ແລະຈີກຂ້າພະເຈົ້າເປັນຕ່ອນໆ ພຣະອົງຊົງກະທຳໃຫ້ຂ້າພະເຈົ້າຖືກຖິ້ມໄວ້
12 ພຣະອົງຊົງກົ່ງທະນູຂອງພຣະອົງ ແລະເອົາຂ້າພະເຈົ້າຕັ້ງເປັນເປົ້າສຳລັບລູກທະນູ
13 ພຣະອົງຊົງເອົາລູກທະນູໃນແຫລ່ງຂອງພຣະອົງ ຍິງເຂົ້າໃນຫົວໃຈຂອງຂ້າພະເຈົ້າແລ້ວ
14 ຂ້າພະເຈົ້າໄດ້ກາຍເປັນຂີ້ປາກໃຫ້ຊົນຊາດທັງຫລາຍຫົວເຍາະເຍີ້ຍ ເປັນເນື້ອເພງໃຫ້ເຂົາຮ້ອງຫລິ້ນຕລອດທັງວັນ
15 ພຣະອົງໃຫ້ຈິດໃຈຂອງຂ້າພະເຈົ້າເຕັມແຕ່ຄວາມຂົ່ມຂື່ນ ໃຫ້ໂສກເສົ້າເຫງົາຫງອຍຕລອດເວລາ
16 ພຣະອົງກະທຳໃຫ້ແຂ້ວຂ້າພະເຈົ້າໄດ້ຫັກດ້ວຍຫີນແຮ່ ແລະຊົງຢຽດຂ້າພະເຈົ້າໃຫ້ຢູ່ໃນກອງຂີ້ເຖົ່າ
17 ຈິດວິນຍານຂອງຂ້າພະເຈົ້າຂາດຄວາມສງົບສຸກ ຈົນຂ້າພະເຈົ້າລືມຄວາມເບີກບານວ່າເປັນຢ່າງໃດ
18 ຂ້າພະເຈົ້າຈຶ່ງວ່າ, “ສັກສີຂອງຂ້າພະເຈົ້າສູນໄປແລ້ວ ແລະຄວາມຫວັງໃນພຣະເຈົ້າກໍດັບຫມົດ”
19 ຂໍຊົງຈຳຄວາມທຸກໃຈ ແລະຄວາມຖືກບີບຄັ້ນຂອງຂ້າພະເຈົ້າ ກໍເຕັມດ້ວຍຢາພິດອັນຂົມຂື່ນ
20 ຈິດວິນຍານຂອງຂ້າພະເຈົ້າຍັງລະນຶກເຖິງຢ່າງບໍ່ສິ້ນສຸດ ແລະຖືກກົດດັນພາຍໃນຕົວຂ້າພະເຈົ້າ
21 ຂ້າພະເຈົ້າຫວນຄິດຂຶ້ນມາໄດ້ ຂ້າພະເຈົ້າມີຄວາມຫວັງຂຶ້ນເມື່ອຄິດໄດ້ວ່າ
22 ຄວາມຮັກຫມັ້ນຄົງຂອງພຣະເຈົ້າບໍ່ເຄີຍຢຸດຢັ້ງ ແລະພຣະເມດຕາຂອງພຣະເຈົ້າບໍ່ມີສິ້ນສຸດ
23 ເປັນຂອງໃຫມ່ຢູ່ທຸກເວລາເຊົ້າ ຄວາມທ່ຽງຕົງຂອງພຣະອົງຍິ່ງໃຫຍ່ຫລາຍ
24 ຈິດໃຈຂອງຂ້າພະເຈົ້າວ່າ, “ພຣະເຈົ້າຊົງເປັນສ່ວນຂອງຂ້າພະເຈົ້າ ເຫດສັນນີ້ຂ້າພະເຈົ້າຈະຫວັງໃນພຣະອົງ”
25 ພຣະເຈົ້າຊົງດີຕໍ່ຄົນທັງປວງທີ່ຄອຍຖ້າພຣະອົງຢູ່ ແລະຊົງດີຕໍ່ຄົນທີ່ສແວງຫາພຣະອົງ
26 ເປັນການດີທີ່ຈະຫວັງໃຈ ແລະລໍຄອຍຄວາມລອດຈາກພຣະຜູ້ເປັນເຈົ້າ
27 ເປັນການດີທີ່ຄົນເຮົາຈະແບກແອກໃນວັນໜຸ່ມ
28 ໃຫ້ເຂົານັ່ງງຽບໆ ຢູ່ແຕ່ລຳພັງ ເພາະພຣະອົງຊົງວາງແອກນັ້ນເອງ
29 ໃຫ້ເຂົາເອົາປາກຈົດໄວ້ໃນຜົງຂີ້ດິນ (ຖ້າທຳດັ່ງນັ້ນຍັງຈະມີຫວັງ)
30 ໃຫ້ເຂົາອຽງແກ້ມໃຫ້ຜູ້ທີ່ຕົບເຂົາ ໃຫ້ເຂົາຍອມຮັບຄວາມອັບອາຍຢ່າງເຕັມປ່ຽມເຖີດ
31 ດ້ວຍວ່າພຣະເຈົ້າຈະບໍ່ຊົງປະຖິ້ມຕລອດໄປດອກ
32 ແຕ່ວ່າຖ້າພຣະອົງຊົງກະທຳໃຫ້ເກີດຄວາມເສົ້າໂສກ ພຣະອົງຈະຊົງພຣະກະຣຸນາຕາມຄວາມຮັກຫມັ້ນຄົງອັນລົ້ນເຫລືອຂອງພຣະອົງ
33 ເພາະພຣະອົງບໍ່ຊົງພໍພຣະທັຍທີ່ໄດ້ທຳໃຫ້ເກີດຄວາມທຸກໃຈ ຫລືລູກຫລານມະນຸດມີຄວາມໂສກ
34 ການຢຽບຢ່ຳ ບັນດາຊະເລີຍແຫ່ງແຜ່ນດິນໂລກໄວ້ໃຕ້ຕີນກໍດີ
35 ການຕັດສິດຂອງມະນຸດຜູ້ນຶ່ງຜູ້ໃດຕໍ່ພຣະພັກຜູ້ຍິ່ງໃຫຍ່ສູງສຸດກໍດີ
36 ຖ້າເຂົາທຳຜິດຕໍ່ຜູ້ນຶ່ງຜູ້ໃດໃນຄະດີແຫ່ງຕົນ ພຣະເຈົ້າບໍ່ຊົງພໍພຣະທັຍເລີຍ
37 ຜູ້ໃດຈະສັ່ງແລະໃຫ້ເປັນໄປໄດ້ນອກຈາກເມື່ອພຣະເຈົ້າຊົງສະຖາປະນາໃຫ້ເປັນໄປ
38 ນອກຈາກພຣະໂອດຂອງພຣະຜູ້ສູງສຸດນັ້ນບໍ່ແມ່ນມີມາທັງຮ້າຍແລະດີ ຍາກແລະສະບາຍຫລື

39 ມະນຸດທີ່ມີຊີວິດຢູ່ຈະໄປຈົ່ມເອົາກັບໃຜ ຄືມະນຸດທີ່ຖືກທຳໂທດເພາະບາບຂອງຕົນ
40 ໃຫ້ພວກເຮົາທົດສອບ ແລະພິຈາລະນາທາງຂອງພວກເຮົາ ແລະກັບມາຫາພຣະຜູ້ເປັນເຈົ້າເຖີດ
41 ໃຫ້ພວກເຮົາຍົກຈິດໃຈ ແລະມືຂອງພວກເຮົາຂຶ້ນຕໍ່ພຣະພຣະເຈົ້າໃນຟ້າສວັນທູນວ່າ,
42 "ພວກຂ້າພຣະອົງໄດ້ທໍຣະຍົດ ແລະໄດ້ກະບົດແລ້ວ ແລະພຣະອົງຍັງບໍ່ໄດ້ຊົງອະພັຍໂທດ"
43 "ພຣະອົງຊົງຫົ່ມຄວາມກິ້ວ ແລະໄລ່ຕາມພວກຂ້າພຣະອົງໄດ້ຊົງປະຫານຢ່າງບໍ່ສົງສານ
44 ພຣະອົງຊົງຄຸມພຣະອົງໄວ້ເສັຽດ້ວຍເມກ ເພື່ອວ່າການອ້ອນວອນຂອງພວກຂ້າພຣະອົງຈະບໍ່ທະລຸໄປເຖິງພຣະອົງໄດ້
45 ພຣະອົງໄດ້ຊົງກະທຳໃຫ້ພວກຂ້າພຣະອົງເປັນເຫມືອນສິ່ງເສດເຫລືອແລະຂີ້ເຍື່ອທີ່ຖິ້ມຢູ່ໃນຖ້າມກາງຊົນຊາດທັງຫລາຍ
46 "ບັນດາສັດຕຣູຂອງພວກຂ້າພຣະອົງໄດ້ອ້າປາກຮ້ອງໃສ່ພວກຂ້າພຣະອົງ
47 ເຫດການທີ່ໜ້າຢ້ານແລະຫລຸມພາງມາເຖິງຂ້າພຣະອົງ ທັງຄວາມວ່າງເປົ່າແລະຄວາມພິນາດ
48 ນ້ຳຕາຂອງຂ້າພຣະອົງໄຫລເປັນແມ່ນ້ຳ ເນື່ອງດ້ວຍຄວາມພິນາດແຫ່ງທິດາຂອງຊົນຊາດຂອງຂ້າພຣະອົງ
49 "ນ້ຳຕາຂອງຂ້າພຣະອົງໄຫລລົງບໍ່ຢຸດ ແລະບໍ່ມີເວລາຊ່ວງເຊົາເລີຍ
50 ຈົນກວ່າພຣະຜູ້ເປັນເຈົ້າຈະທອດພຣະເນດລົງຫລຽວເບິ່ງຈາກສວັນ
51 ຕາຂອງຂ້າພຣະອົງທຳໃຫ້ລະທົມ ເພາະເຄາະກັມຂອງບັນດາບຸດຕຣີແຫ່ງເມືອງຂອງຂ້າພຣະອົງ
52 "ພວກທີ່ຕັ້ງຕົນເປັນສັດຕຣູຕໍ່ຂ້າພຣະອົງໂດຍບໍ່ມີເຫດຜົນນັ້ນ ໄດ້ຂັບໄລ່ຂ້າພຣະອົງດັ່ງຂັບໄລ່ນົກ
53 ເຂົາທັງຫລາຍແກ່ວງຂ້າພຣະອົງລົງໃນບໍ່ໃຫ້ຕາຍ ແລະເອົາຫີນຖິ້ມທັບຂ້າພຣະອົງເສັຽ
54 "ນ້ຳໄດ້ຖ້ວມຫົວຂອງຂ້າພຣະອົງ ຂ້າພຣະອົງວ່າ, "ຂ້າພະເຈົ້າສູນເສັຽແນ່ແລ້ວ"
55 "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງໄດ້ຮ້ອງອອກພຣະນາມຂອງພຣະອົງຈາກທີ່ເລິກໃນນ້ຳສ້າງ
56 ພຣະອົງຊົງສະດັບສຽງຂ້າພຣະອົງທີ່ວ່າ, "ຂໍຢ່າຊົງບັງພຣະກັນຕໍ່ຄຳຂອງຂ້າພຣະອົງທີ່ຮ້ອງທູນຂໍໃຫ້ຊ່ອຍ"
57 ພຣະອົງຊົງເຂົ້າມາໃກ້ໃນວັນທີ່ຂ້າພຣະອົງຮ້ອງທູນພຣະອົງ ພຣະອົງຕຣັສວ່າ, "ບໍ່ຕ້ອງຢ້ານ"
58 "ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງເຂົ້າກັບຄະດີຂອງຂ້າພຣະອົງແລ້ວ ພຣະອົງຊົງໄຖ່ຊີວິດຂ້າພຣະອົງ
59 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເຫັນທີ່ເຂົາຜິດຕໍ່ຂ້າພຣະອົງແລ້ວ ຂໍຊົງພິພາກສາຄະດີຂອງຂ້າພຣະອົງເຖີດ
60 ພຣະອົງໄດ້ຊົງເຫັນໃຈແກ້ແຄ້ນຂອງເຂົາແລະແຜນການທຳຮ້າຍຂ້າພຣະອົງແລ້ວ
61 "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງໄດ້ຍິນຄຳເຍາະເຍີ້ຍ ແລະແຜນການທຳຮ້າຍຂ້າພຣະອົງແລ້ວ
62 ຄືຮີມຝີປາກແລະຄວາມຄິດຂອງຜູ້ທີ່ໄດ້ຮຸກຮານຂ້າພຣະອົງ ກໍຕໍ່ສູ້ຂ້າພຣະອົງຢູ່ຕລອດວັນ
63 ເບິ່ງແມ, ບໍ່ວ່າເຂົາຈະນັ່ງຫລືລຸກ ຕົວຂ້າພຣະອົງກໍເປັນເນື້ອເພງໃຫ້ເຂົາຮ້ອງຫລິ້ນ
64 "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຕອບສນອງເຂົາທັງຫລາຍ ຕາມກັມແຫ່ງນ້ຳມືຂອງເຂົາ
65 ພຣະອົງຄົງຈະຊົງກະທຳໃຫ້ໃຈຂອງເຂົາທັງປວງມືດມົວໄປ ຄຳສາບຂອງພຣະອົງຄົງຕົກເຫນືອເຂົາ
66 ພຣະອົງຍັງຄົງໄລ່ຕິດເຂົາໄປດ້ວຍພຣະພິໂຣດແລະທຳລາຍເຂົາເສັຽ ຈາກໃຕ້ຟ້າສວັນຂອງພຣະຜູ້ເປັນເຈົ້າ"

## 4 ສຳເຣັດການລົງໂທດຊີໂອນ

The Punishment of Zion

1 ເປັນຢ່າງໃດຫນໍ ທອງຄຳຈຶ່ງມີສີສລົວ ແລະທອງນົພຄຸນກໍປ່ຽນໄປ ເພັດພອຍສັກສິດກໍແຕກກະຈາຍຕາມທຸກທາງຖນົນ
2 ບຸດຊາຍຜູ້ປະເສີດຂອງກຸງຊີໂອນ ມີຄ່າປຽບໄດ້ກັບທອງນົພຄຸນນັ້ນ ຖືກຕີຣາຄາພຽງເທົ່າຫມໍ້ດິນທີ່ປັ້ນຂຶ້ນດ້ວຍມືຂອງຊ່າງຫມໍ້ເທົ່ານັ້ນຫນໍ

3 ແມ່ນແຕ່ຫມາປ່າຍັງໄດ້ເອົານົມອອກໃຫ້ລູກຂອງມັນດູດ ແຕ່ທິດາແຫ່ງຊົນຊາດຂອງຂ້າພະເຈົ້າກໍໃຈຮ້າຍດັ່ງ
ນົກກະຈອກເທດໃນຖິ່ນການດານ
4 ລີ້ນຂອງແອນ້ອຍທີ່ຍັງບໍ່ຢ່ານົມຫິວກະຫາຍຈົນຕິດເຫລືອກ ພວກເດັກໄດ້ຂໍອາຫານແຕ່ບໍ່ມີໃຜຍື່ນໃຫ້ເຂົາ
5 ຄົນທັງປວງທີ່ເຄີຍຮັບປະທານອາຫານຢ່າງວິເສດຕ້ອງພິນາດຢູ່ຕາມຖນົນ ຄົນທັງຫລາຍທີ່ເຄີຍຫົ່ມເສື້ອສີມ່ວງ
ຕ້ອງນອນເທິງກອງຂີ້ເຍື່ອ
6 ເພາະໂທດຜິດຂອງທິດາແຫ່ງຊົນຊາດ ຂ້າພະເຈົ້ານັ້ນກໍຍິ່ງໃຫຍ່ກວ່າໂທດຂອງເມືອງໂຊໂດມ ທີ່ຕ້ອງຂວ້ຳທະ
ລາຍລົງໃນພິບຕາຖຽວໂດຍບໍ່ມີມືໃຜໄດ້ແຕະຕ້ອງເລີຍ
7 ພວກເຈົ້ານາຍນັ້ນບໍຣິສຸດກວ່າຫິມມະ ແລະຂາວກວ່ານ້ຳນົມ ຜິວພັນຂອງເຂົາເປັ່ງປັ່ງຍິ່ງກວ່າຫີນແກ້ວພິລາ
ເຂົາມີຮູບຮ່າງງາມດັ່ງໄພທູນ
8 ບັດນີ້ຜິວພັນຂອງເຂົາກໍມືດກວ່າສີດຳ ຄົນທີ່ຢູ່ຕາມຖນົນກໍຈື່ເຂົາບໍ່ໄດ້ ຫນັງຂອງເຂົາຫ່ຽວຫຸ້ມກະດູກ ແລະຈ່ອຍ
ຜອມສໍ່າກັບດົ້ນພືນ
9 ຄົນທີ່ຕາຍດ້ວຍຄົມດາບຍັງດີກວ່າ ຄົນທີ່ຕ້ອງອຶດຢາກຕາຍ ເພາະຄົນເຫລົ່ານີ້ຄ່ອຍຈ່ອຍລົງຄ່ອຍຕາຍໄປ
ເພາະຂາດຜົນຈາກທົ່ງນາ
10 ມືຂອງຍິງທີ່ໃຈອ່ອນເອົາລູກຂອງຕົນຕົ້ມກິນ ລູກທີ່ຖືກຕົ້ມກິນເປັນອາຫານນັ້ນ ກໍກິນເມື່ອຍາມພັຍວິບັດມາສູ່ທິ
ດາແຫ່ງຊົນຊາດຂອງຂ້າພະເຈົ້າ
11 ພຣະຜູ້ເປັນເຈົ້າຊົງບັນດານໂທໂສອອກມາແລ້ວ ພຣະອົງຊົງເທພຣະພິໂຣດອັນກ້ຽວກາດຂອງພຣະອົງລົງແລ້ວ
ແລະໄດ້ຊົງຈຸດໄຟຂຶ້ນໃນເມືອງຊີໂອນ ຊຶ່ງເຜົາຜານແມ່ນແຕ່ຮາກຂອງເມືອງນັ້ນ
12 ກະສັດທັງປວງແຫ່ງແຜ່ນດິນໂລກ ແລະບັນດາຊາວພິພົບພາກັນບໍ່ເຊື່ອວ່າ ສັດຕຣູຈະໄດ້ເຂົ້າໄປໃນປະຕູກຸງເຢ
ຣູຊາເລັມໄດ້
13 ເພາະຄວາມຜິດບາບຂອງພວກຜູ້ປະກາດພຣະທັມຂອງເມືອງຊີໂອນ ແລະເພາະການບາບຂອງພວກປະໂຣ
ຫິດຂອງເມືອງນັ້ນໄດ້ກະທຳໃຫ້ເລືອດຂອງຜູ້ຊອບທັມໄຫລອອກໃນຖ້າມກາງເມືອງ
14 ເຂົາທັງຫລາຍຍ່າງໂຊເຊແລະຕາບອດໄປຕາມຖນົນ ທຳຕົນໃຫ້ມີມົນທິນດ້ວຍເລືອດ ຈົນຄົນຈະຈັບບາຍບໍ່ໄດ້
ທີ່ເສື້ອຜ້າຂອງເຂົາ
15 “ຫນີໄປສາ ຄົນມີມົນທິນ”ຄົນທັງຫລາຍຮ້ອງໃສ່ເຂົາ “ຫນີໄປ ຫນີໄປ ຢ່າມາແຕະຕ້ອງ” ສະນັ້ນເຂົາຈຶ່ງຫນີໄປ
ເປັນຄົນພະເນຈອນ ພົລເມືອງຂອງປະຊາຊາດເວົ້າກັນວ່າ,”ເຂົາບໍ່ຄວນຢູ່ທີ່ນີ້ອີກຕໍ່ໄປ”
16 ພຣະຜູ້ເປັນເຈົ້າເອງຊົງກະທຳໃຫ້ເຂົາທັງປວງກະຈັດກະຈາຍໄປ ພຣະອົງຈະບໍ່ຊົງສົນພຣະທັຍໃນເຂົາອີກເລີຍ
ຄົນທັງຫລາຍຈຶ່ງບໍ່ນັບຖືພວກປະໂຣຫິດ ບໍ່ໃຫ້ຄວາມນັບຖືຕໍ່ພວກຜູ້ນຳ
17 ຕາຂອງພວກເຮົາຫລຽວຫາຄວາມຊ່ອຍເຫລືອ ການຊ່ອຍເຫລືອນັ້ນເປັນລົມເປັນແລ້ງ ສ່ວນການເຝົ້າລໍຄອຍ
ພວກເຮົາໄດ້ຄອຍ ເມືອງທີ່ບໍ່ອາດຊ່ອຍເຮົາໄດ້
18 ມີຄົນສົ້ງຊອມຕິດຕາມເຮົາ ຈົນພວກເຮົາຍ່າງທີ່ລານເມືອງຂອງພວກເຮົາບໍ່ໄດ້ ເບື້ອງປາຍຂອງພວກເຮົາກໍໃກ້
ເຂົ້າມາແລ້ວ ວັນເດືອນທັງຫລາຍຂອງພວກເຮົາກໍຈະຈົມຢູ່ເພາະບັ້ນປາຍຂອງພວກເຮົາມາເຖິງ
19 ພວກທີ່ໄລ່ຕາມຈັບເຮົາກໍໄວກວ່ານົກອິນຊີໃນທ້ອງຟ້າ ເຂົາທັງຫລາຍແລ່ນກວາດພວກເຮົາເທິງພູ ເຂົາທັງ
ຫລາຍຄອຍດັກຈັບເຮົາໃນຖິ່ນກັນດານ
20 ເຈົ້າຊີວິດຂອງພວກຂ້າພະເຈົ້າ ຄືກະສັດທີ່ພຣະເຈົ້າຊົງເລືອກໄວ້ນັ້ນກໍຕົກຫລຸມພາງຂອງເຂົາທັງຫລາຍແລ້ວ ຄື
ພວກເຮົາກ່າວຂວັນເຖິງພຣະອົງທ່ານວ່າ,” ເຮົາຈະດຳຣົງຊີວິດຂອງເຮົາຖ້າມກາງປະຊາຊາດໄດ້ ກໍດ້ວຍອາສັຍ
ຮົ່ມເງົາຂອງພຣະອົງທ່ານ”

21 ໂອ ທິດາແຫ່ງເມືອງເອໂດມ ທີ່ອາສັຍຢູ່ໃນປະເທດອູດ ຈົ່ງຊົມຊື່ນຍິນດີເຖີດ ຂັນໃບນັ້ນຄົງຈະສົ່ງຜ່ານມາເຖິງ
ເຈົ້າດ້ວຍເປັນແນ່ ເຈົ້າຈະຕ້ອງເມົາໄປ ແລະຈະຕ້ອງແກ້ຜ້າເປືອຍຕົວລ້ອນຈ້ອນ
22 ໂອ ທິດາແຫ່ງກຸງຊີໂອນເອີຍ ການລົງໂທດເພາະການອະທັມຂອງເຈົ້າກໍຄົບແລ້ວ ພຣະອົງຈະບໍ່ຊົງພາເຈົ້າ
ອອກໄປໃຫ້ເປັນຊະເລີຍອີກຕໍ່ໄປ ໂອທິດາແຫ່ງເມືອງເອໂດມເອີຍ ພຣະອົງຈະຊົງລົງໂທດ ເພາະຄວາມບາບ
ຜິດຂອງເຈົ້າ ພຣະອົງຈະຊົງເປີດເຜີຍບາບຂອງເຈົ້າ

## 5 ຄຳອ້ອນວອນຂອງພຣະກະຣຸນາທິຄຸນ

A Plea for Mercy

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະນຶກວ່າມີສິ່ງໃດຕົກເຖິງຂ້າພຣະອົງ ເບິ່ງແມ, ຂໍຊົງພິຈາຣະນາຄວາມອັບອາຍ
ຂາຍໜ້າຂອງຂ້າພຣະອົງ
2 ມໍຣະດົກຂອງພວກຂ້າພຣະອົງໄດ້ໄປຕົກຢູ່ກັບພວກຕ່າງປະເທດ ບ້ານເຮືອນຂອງພວກຂ້າພຣະອົງເປັນ
ຂອງຄົນຕ່າງດ້າວ
3 ພວກຂ້າພຣະອົງເປັນຄົນກຳພ້າພໍ່ ແລະບັນດາແມ່ຂອງຂ້າພຣະອົງເປັນດັ່ງຍິງໝ້າຍ
4 ນ້ຳກໍຕ້ອງຊື້ເຂົາດື່ມ ຟືນກໍຕ້ອງຊື້ເຂົາໃຊ້
5 ຜູ້ຂົ່ມຂີ່ໄດ້ຂີ່ຄໍພວກຂ້າພຣະອົງໄວ້ ພວກຂ້າພຣະອົງອ່ອນເພັຽ ແລະເຂົາບໍ່ໃຫ້ມີເວລາພັກເລີຍ
6 ພວກຂ້າພຣະອົງຍໍມືນົບຄົນເອຢິບ ແລະຄົນອັສຊີເຣັຽ ເພື່ອຈະໄດ້ອາຫານກິນອີ່ມ
7 ບັນພະບຸຣຸດຂອງພວກຂ້າພຣະອົງໄດ້ກະທຳບາບ ແລະກໍຕາຍໝົດແລ້ວ ພວກຂ້າພຣະອົງຕ້ອງຖືກໂທດເພາະ
ບາບຂອງພວກເຂົາ
8 ພວກຂ້າທາດປົກຄອງພວກຂ້າພຣະອົງ ບໍ່ມີຜູ້ໃດຊ່ອຍຂ້າພຣະອົງໃຫ້ພົ້ນມືຂອງເຂົາໄດ້
9 ຂ້າພຣະອົງທັງຫລາຍໄດ້ອາຫານມາໂດຍເອົາຊີວິດເຂົ້າສ່ຽງ ເພາະດາບແຫ່ງຖິ່ນກັນດານ
10 ຜິວໜັງຂອງພວກຂ້າພຣະອົງກໍຮ້ອນປານເຕົາອົບ ເພາະຄວາມເດືອດຮ້ອນເຮັດໃຫ້ເຈັບໄຂ້
11 ເຂົາທັງຫລາຍຂົ່ມຂືນພວກຜູ້ຍິງໃນເມືອງຊີໂອນ ແລະຂົ່ມຂືນສາວພົມມະຈາຣີໃນຫົວເມືອງແຫ່ງຢູດາ
12 ພວກເຈົ້ານາຍຕ້ອງຖືກຜູກມືແຂວນໄວ້ບໍ່ມີໃຜນັບຖືພວກຜູ້ນຳ
13 ພວກຄົນໜຸ່ມຖືກບັງຄັບໃຫ້ໂມ້ແປ້ງ ແລະພວກເດັກຕ້ອງແບກຟືນໜັກລົ້ມລຸກຄຸກຄານ
14 ພວກຜູ້ໃຫຍ່ຫາຍຕົວໄປຈາກປະຕູເມືອງ ພວກຄົນໜຸ່ມໄດ້ຢຸດດີດສີຕີເປົ່າແລ້ວ
15 ຄວາມສຸກຫາຍໄປສິ້ນຈາກໃຈຂອງພວກຂ້າພຣະອົງ ການເຕັ້ນລຳຂອງພວກຂ້າພຣະອົງກາຍເປັນການໂສກ
ເສົ້າ
16 ມົງກຸດໄດ້ຫລົ່ນລົງຈາກຫົວຂ້າພຣະອົງແລ້ວ ວິບັດແກ່ພວກຂ້າພຣະອົງເພາະພວກຂ້າພຣະອົງກະທຳບາບໄວ້
17 ເຫດນີ້ເອງໃຈພວກຂ້າພຣະອົງຈຶ່ງເຈັບປວດ ເພາະການເຫລົ່ານີ້ເອງ ຕາຂ້າພຣະອົງຈຶ່ງມົວໄປ
18 ເຫດດ້ວຍພູຊີໂອນຊຶ່ງເກີດຮ້າງເປົ່າ ພວກໝາຈອກໄດ້ຍ່າງໄປມາຢູ່ເທິງທີ່ນັ້ນ
19 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຄອບຄອງຢູ່ເປັນນິດ ພຣະທີ່ນັ່ງຂອງພຣະອົງດຳຣົງຢູ່ທຸກຊົ່ວຊາດພັນ
20 ເຫດໃດພຣະອົງຊົງລືມພວກຂ້າພຣະອົງເປັນນິດ ເຫດໃດໄດ້ຊົງປະຖິ້ມພວກຂ້າພຣະອົງດົນນານດັ່ງນີ້
21 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍຂ້າພຣະອົງໃຫ້ກັບສູ່ພຣະອົງເຖີດ ແລ້ວພວກຂ້າພຣະອົງຈະກັບສູ່ພຣະອົງ ຂໍ
ຊົງຟື້ນເດືອນປີຂອງຂ້າພຣະອົງໃຫ້ເໝືອນແຕ່ກ່ອນ
22 ເວັ້ນເສັຽແຕ່ພຣະອົງຊົງປະຖິ້ມພວກຂ້າພຣະອົງໄປແລ້ວ ແລະພຣະອົງຊົງພິໂຣດພວກຂ້າພຣະອົງຢ່າງລົ້ນ
ເຫລືອ